**ມິຊຊາອາທິດທີ 11 ການົດທຳມະດາ ປີ B**

**ວັນອາທິດທີ 13 ມິຖຸນາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 4, 26-34**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວຄວາມປຽບທຽບແກ່ຝູງຊົນວ່າ: ອານາຈັກຂອງພຣະເປັນເຈົ້າປຽບເໝືອນຄົນທີ່ຫວ່ານແນວຂອງປູກລົງໃສ່ດິນ. ເຂົາຈະນອນຫລັບຫລືຕື່ນຢູ່, ຍາມກາງເວັນຫລືກາງຄືນກໍຕາມ ແນວປູກນັ້ນກໍແຕກງອກໃຫຍ່ຂຶ້ນໂດຍເຂົາເອງບໍ່ຮູ້ວ່າມັນເປັນໄປແນວໃດ. ມີແຕ່ດິນຢ່າງດຽວທຳໃຫ້ເກີດເປັນຕົ້ນອ່ອນ, ແລ້ວອອກຮວງ. ສຸດທ້າຍ, ຮວງນັ້ນກໍເຕັມດ້ວຍເມັດເຂົ້າຕຶ່ງ. ເມື່ອເຂົ້າສຸກແລ້ວ, ເຂົາກໍເອົາກ່ຽວມາກ່ຽວ. ຍ້ອນວ່າເຖິງຍາມກ່ຽວແລ້ວ.

ພຣະອົງຊົງກ່າວຕໍ່ໄປວ່າ: ເຮົາຈະປຽບອານາຈັກຂອງພຣະເຈົ້າໃສ່ຫຍັງ; ແລະຈະເອົາຄວາມປຽບແນວໃດມາທຽບໃສ່? ເຮົາຈະປຽບໃສ່ເມັດງາ ອັນເປັນເມັດຜັກທີ່ນ້ອຍທີ່ສຸດໃນພວກເມັດພືດທີ່ເຂົາຫວ່ານລົງດິນ. ແຕ່ພໍແຕກງອກຂຶ້ນແລ້ວ, ມັນກໍກາຍເປັນຕົ້ນໄມ້ໃຫຍ່ກວ່າຜັກທຸກຊະໜິດໃນສວນ, ແຕກກິ່ງກ້ານອອກໄປຈົນນົກໃນອາກາດມາພັກອາໄສຢູ່ຮົ່ມຂອງມັນໄດ້.

ພຣະອົງຊົງປ່າວປະກາດພຣະວາຈາເປັນຄວາມປຽບທຽບຢ່າງນີ້ອີກຫລວງຫລາຍ ຕາມແຕ່ປະຊາຊົນຈະເຂົ້າໃຈໄດ້. ພຣະອົງບໍ່ຊົງກ່າວຫຍັງໂດຍບໍ່ໃຊ້ຄວາມປຽບ. ແຕ່ໄດ້ຊົງແປອະທິບາຍເປັນພິເສດແກ່ພວກສາວົກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ພຣະເຢຊູເຈົ້າກ່າວເຖິງອານາຈັກຂອງພຣະເປັນເຈົ້າໂດຍໃຊ້ຄຳສົມທຽບເລື່ອງຜູ້ຫວ່ານເພື່ອອະທິບາຍໃຫ້ຝູງຊົນຟັງ. ສິ່ງທີ່ໜ້າຄິດໃນທີ່ນີ້ກໍຄືອານາຈັກສະຫວັນສຳລັບພວກເຮົາຜູ້ເປັນມະນຸດ: ເປັນສະຖານທີ່ສຳຄັນ, ເປັນສິ່ງທີ່ຍິ່ງໃຫຍ່, ເປັນຄວາມຫວັງ, ຄວາມປາດຖະໜາຂອງມະນຸດທຸກຄົນທີ່ຈະໄດ້ເປັນກຳມະສິດ ເພື່ອຈະໄດ້ເຂົ້າຢູ່ຮ່ວມສຸກກັບພຣະເຈົ້າໃນອານາຈັກຂອງພຣະອົງ. ແຕ່ວັນນີ້, ພຣະເຢຊູເຈົ້າພັດສົມທຽບສິ່ງທີ່ຍິ່ງໃຫຍ່ແລະສຳຄັນນີ້ກັບສິ່ງທຳມະດາ, ຕ່ຳນ້ອຍແລະຢູ່ໃນຊີວິດປະຈຳວັນຊຶ່ງທຸກຄົນສາມາດພົບເຫັນແລະເຂົ້າໃຈໄດ້ຄືເມັດໝາກງາ. ເປັນຫຍັງພຣະເຢຊູເຈົ້າຈິ່ງສົມທຽບແບບນີ້? ພຣະອົງຢາກບອກສອນພວກເຮົາຫຍັງ?

ແນ່ນອນໃນຊີວິດກຣິສຕັງ, ພວກເຮົາແຕ່ລະຄົນລ້ວນແຕ່ມີຄວາມປາດຖະໜາຢາກໄດ້ເມືອງສະຫວັນ, ຢາກໄປຢູ່ຮ່ວມກັບພຣະເຈົ້າໃນອານາຈັກຂອງພຣະອົງ. ຄວາມຄິດແລະຄວາມປາດຖະໜານີ້ເຮັດໃຫ້ພວກເຮົາຊອກຫາທຸກວິທີທາງເພື່ອຈະໄດ້ສົມດັ່ງປາດຖະໜາ. ດັ່ງນັ້ນ, ພວກເຮົາຈິ່ງອອກເຫື່ອເທແຮງແລະຊອກຫາວຽກງານທີ່ສຳຄັນ ແລະຍິ່ງໃຫຍ່ເພື່ອກະທຳຍ້ອນຢາກສ້າງບຸນກຸສົນຫລາຍເພື່ອວັນໜຶ່ງພຣະເຈົ້າຈະປະທານບຳເນັດລາງວັນຄືອານາຈັກຂອງພຣະອົງໃຫ້ພວກເຮົາ. ຄວາມຄິດນີ້ທຳໃຫ້ພວກເຮົາລືມໄປສິ່ງທີ່ພວກເຮົາຄວນກະທຳໃນຊີວິດແຕ່ລະວັນເຊັ່ນ: ການເປັນພໍ່, ແມ່ທີ່ດີ. ການເປັນລູກທີ່ດີແລະການເປັນພົນລະເມືອງທີ່ດີ. ແມ່ນສິ່ງເຫລົ່ານີ້ແລຈະນຳພວກເຮົາໄປສູ່ອານາຈັກຂອງພຣະເຈົ້າ. ເໝືອນດັ່ງນັກບຸນເທເຣຊາແຫ່ງພຣະເຢຊູກຸມານ. ທ່ານນັກບຸນບໍ່ໄດ້ເຮັດສິ່ງທີ່ຍິ່ງໃຫຍ່ເລີດລ້ຳແຕ່ຢ່າງໃດ, ນອກຈາກການເປັນນັກບວດທີ່ດີໃນອາຮາມແລະໃຊ້ຊີວິດປະຈຳວັນຢ່າງດີກັບເອື້ອຍນ້ອງນັກບວດດ້ວຍກັນ. ແລະເປັນຕົ້ນຊີວິດກັບພຣະເຈົ້າໃນຄຳພາວະນາ.

ຊີວິດນັກບຸນເທເຣຊານີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງເມັດໝາກງາຊຶ່ງພຣະເຢຊູເຈົ້ານຳໃຊ້ວັນນີ້ເພື່ອກ່າວເຖິງອານາຈັກສະຫວັນ. ແລະກໍເປັນຄວາມຫວັງສຳລັບພວກເຮົາວ່າອານາຈັກຂອງພຣະເຈົ້າບໍ່ໄດ້ເປັນສິ່ງທີ່ເໜືອບ່າກວ່າແຮງຂອງພວກເຮົາ. ແລະອານາຈັກຂອງພຣະເຈົ້າບໍ່ໄດ້ຢູ່ຫ່າງໄກຈາກພວກເຮົາ. ແຕ່ອານາຈັກສະຫວັນຢູ່ໃນຊີວິດປະຈຳວັນຂອງພວກເຮົາ ແລະຢູ່ໃນຄອບຄົວຂອງພວກເຮົານັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດໃຫ້ວາຈາຂອງພຣະອົງວັນນີ້ຊ່ວຍລູກໃຫ້ມີຄວາມຫວັງແລະກຳລັງໃຈໃນການດຳລົງຊີວິດຄວາມເຊື່ອຂອງລູກແຕ່ລະວັນ. ເພາະອານາຈັກຂອງພຣະອົງບໍ່ໄດ້ຢູ່ຫ່າງໄກຈາກລູກ, ແຕ່ຢູ່ໃນຊີວິດຂອງລູກ. ບໍ່ໄດ້ເປັນສິ່ງທີ່ເໜືອບ່າກວ່າແຮງລູກ, ແຕ່ໃນສິ່ງເລັກນ້ອຍທີ່ລູກກະທຳດ້ວຍຄວາມຮັກນັ້ນເອງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ